Washington State Health Care Authority

# ຄວາມຊ່ວຍເຫລືອດ້ານພາສາ

ການບໍລິການຊ່ວຍເຫລືອດ້ານພາສາກໍມີໄວ້ໃຫ້ແກ່ລູກຄ້າຂອງ Health Care Authority (HCA) ຟຣີໂດຍບໍ່ຄິດຄ່າແນວໃດ, ລວມທັງການບໍລິການໂດຍກົງໂດຍພະນັກງານເວົ້າໄດ້ສອງພາສາ, ການບໍລິການດ້ານນາຍແປພາສາ, ແລະ ການແປພາສາຂອງເອກສານຕີພິມ.

## ຊອກຫາລາຍລະອຽດກ່ຽວກັບການຄຸ້ມກັນຂອງໂຄງການ **Washington Apple Health (Medicaid)**

**ສໍາລັບຜູ້ໃຫຍ່ອາຍຸ 18 ປີ ໄປເຖິງ 64 ປີ ແລະ ຜູ້ທີ່ຊອກເອົາການຄຸ້ມກັນສໍາລັບເດັກນ້ອຍ ແລະ ຜູ້ຍິງຖືພາຕັ້ງທ້ອງ**

- ໂທຫາ 1-855-923-4633
- ຊອກຫາຜູ້ຊີ້ນໍາທາງຫລືນາຍໜ້າໃນທ້ອງຖິ່ນເປັນບຸກຄົນ

**ສໍາລັບການຄຸ້ມກັນອີງຕາມຄວາມເສັຽອົງຄະສໍາລັບບຸກຄົນຜູ້ທີ່ຕາບອດ, ເສັຽອົງຄະ, ຫລື ມີອາຍຸ 65 ປີ ແລະ ແກ່ກວ່າ**

- ໂທຫາ 1-877-501-2233
- ຊອກຫາຫ້ອງການບໍລິການຊຸມນຸມຊົນທ້ອງຖິ່ນຂອງ DSHS

**ສໍາລັບບຸກຄົນຜູ້ທີ່ມີຄວາມຕ້ອງການນໍາການເບິ່ງແຍງດູແລຣະຍະຍາວ**

ລວມທັງໂຄງການເບິ່ງແຍງດູແລຢູ່ເຮືອນຜູ້ເຖົ້າ ຫລື ຄົນບໍ່ແຂງແຮງ, ການເບິ່ງແຍງດູແລສ່ວນຕົວຢູ່ໃນເຮືອນ, ສະຖານທີ່ອາສັຍຢູ່ທີ່ຖືກຊ່ວຍເຫລືອນໍາ, ແລະ ໂຄງການເຮືອນຄອບຄົວຜູ້ໃຫຍ່.

- ໂທຫາ 1-800-422-3263
- ຊອກຫາຫ້ອງການບໍລິການຢູ່ຕາມເຮືອນແລະຊຸມນຸມຊົນທ້ອງຖິ່ນຂອງ DSHS

## ຊອກຫາເອກສານທີ່ຖືກແປພາສາແລ້ວ

1. ໄປຫາແວບເພຈ໌ຂອງໃບຟອມ ແລະ ເອກສານຕີພິມຂອງແວບໄຊທ໌ຂອງ HCA: www.hca.wa.gov/apple-health-client-forms.
2. ຊອກຫາແຖວບີບ "Search".




3. ຢູ່ໃນແຖວບີບ "Search" , ຕີຄໍາສໍາຄັນ ຫລື ຊື່ຂອງເອກສານຂອງ HCA ເປັນພາສາອັງກິດ, ຫລື ຕີເລກຂອງເອກສານໃສ່. ບີບປຸ່ມ "Search".
4. ເລືອກເອົາ "Get Form" ຫລື "Get Publication" ແລະ ເລືອກເອົາເອກສານທີ່ມີຢູ່ໃນພາສາທີ່ມັກຈາກລາຍການຍ່ອນລົງມາ.

**ບໍ່ເຫັນເອກສານໃນພາສາທີ່ທ່ານຕ້ອງການ?**

ທ່ານສາມາດໄດ້ຮັບຄວາມຊ່ວຍເຫລືອ ຫລື, ຖ້າຫາກວ່າຈໍາເປັນ, ຂໍໃຫ້ເອກສານຂອງ HCA ຖືກແປພາສາໃຫ້ໄດ້. ໂທຫາ HCA ໄດ້ທີ່ 1-800-562-3022.